**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ 955---

ຫ້ອງການ ເລກທີ /ຫກ

ນະຄອນຫຼວງວຽງຈັນ, ວັນທີ 5 ມີນາ 2026

## ແຈ້ງເຊີນປະມູນ

1. ກະຊວງສຶກສາທິການ ແລະ ກິລາ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ທີ່ມີຄຸນນະວຸດທິ ທີ່ເໝາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການສະໜອງ ການຈັດຊື້ ອຸປະກອນກິລາ, ຊຸດກິລາ ຮັບໃຊ້ການຝຶກແອບ ແລະ ແຂ່ງຂັນ ໃຫ້ ຄະນະນໍາ, ຄູຝຶກ ແລະ ນັກກິລາທີມຊາດລາວ ກະກຽມເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມ ຫາດຊາຍ ຄັ້ງທີ 4 ທີ່ເມືອງຊັນຢາ ສປ ຈີນ ແຕ່ວັນທີ 22-30 ເມສາ 2026 ເປັນເຈົ້າພາບ;
2. ການປະມູນຈະດໍາເນີນຕາມຂັ້ນຕອນ ການປະມູນເປີດກ້ວາງພາຍໃນປະເທດ ທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງ ການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ກວດເບິ່ງເອກະສານປະມູນໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ, ກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ ໂທລະສັບ : 021 263779, 020 99852848, 020 5427115 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ໂດຍການຍື່ນໜັງສືສະເໜີ ຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກບໍລິຫານ ແລະ ຄົ້ນຄວ້າ-ສັງລວມ, ກົມກິລາລະດັບ ສູງ, ກະຊວງສຶກສາທິການ ແລະ ກິລາ, ບ້ານອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ ແຟັກ: 021 263779, 020 99852848, 020 55427115 ເລີ່ມແຕ່ວັນທີ 12 ມີນາ 2026 ຕາມວັນ ເວລາ ລັດຖະການ, ໃນລາຄາ 1,000,000 ກີບ; ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະ ຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 304 ຫ້ອງປະຊຸມກົມກິລາລະດັບສູງ ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 14:00 ໂມງ ຂອງວັນທີ 3 ເມສາ 2026. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກ ຈະບໍ່ອະນຸຍາດ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍ ບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 14:00 ໂມງ ຂອງວັນທີ 3 ເມສາ 2026 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນ ຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

**ຫົວໜ້າຫ້ອງການ**

ກະຊວງສຶກສາທິການ ... ຫ້ອງການ

**ຮສ. ປອ. ຫຼ້າວັນ ວົງຄໍາສານ**

Scanned with CamScanner